ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 449/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 14 ມິຖຸນາ 2022

# ຂໍ້ຕົກລົງ
# ວ່າດ້ວຍການບໍລິການແລກປ່ຽນເງິນຕາ
# ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມນະໂຍບາຍເງິນຕາ ສະບັບເລກທີ 71/ກນງ, ລົງວັນທີ 10 ມິຖຸນາ 2022.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຂອງ ສປປ ລາວ ເພື່ອຄຸ້ມຄອງການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແນໃສ່ເຮັດໃຫ້ການດຸ່ນດ່ຽງລະຫວ່າງຄວາມຕ້ອງການ ກັບ ການສະໜອງເງິນຕາຕ່າງປະເທດໃນສັງຄົມສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງຂອງ ສປປ ລາວ, ແທດເໝາະກັບສະພາບເສດຖະກິດ ແລະ ປະກອບສ່ວນໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ.

**ມາດຕາ 2 ການບໍລິການແລກປ່ຽນເງິນຕາ**

ການບໍລິການແລກປ່ຽນເງິນຕາ ແມ່ນການດຳເນີນທຸລະກຳ ຊື້ ຫຼື ຂາຍເງິນຕາ ຈາກເງິນຕາສະກຸນໜຶ່ງເປັນເງິນຕາສະກຸນອື່ນ ຂອງທະນາຄານທຸລະກິດ ແລະ ຂອງຮ້ານແລກປ່ຽນເງິນຕາຕົວແທນທີ່ບໍລິການແກ່ລູກຄ້າຢູ່ໃນສັງຄົມ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງທັງພາຍໃນ ແລະ ຕ່າງປະເທດ, ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ທີ່ໄດ້ຮັບອະນຸຍາດບໍລິການແລກປ່ຽນເງິນຕາ ຢູ່ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

## ໝວດທີ 2
## ການດຳເນີນການຊື້-ຂາຍ ເງິນຕາ

**ມາດຕາ 4 ການຊື້ເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ສາມາດຊື້ເງິນຕາຕ່າງປະເທດ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງທັງພາຍໃນ ແລະ ຕ່າງປະເທດ ທີ່ມີການເຄື່ອນໄຫວທຸລະກິດ ຫຼື ດຳເນີນທຸລະກຳໃດໜຶ່ງ ຢູ່ ສປປ ລາວ.

ຮ້ານແລກປ່ຽນເງິນຕາຕົວແທນ ສາມາດຊື້ເງິນຕາຕ່າງປະເທດ ຈາກບຸກຄົນເທົ່ານັ້ນ ແລະ ວົງເງິນສູງສຸດທີ່ສາມາດຊື້ເງິນຕາຕ່າງປະເທດໄດ້ທັງໝົດຕໍ່ວັນ ແມ່ນບໍ່ເກີນຈຳນວນເງິນທຶນຈົດທະບຽນຂອງຮ້ານແລກປ່ຽນເງິນຕາຕົວແທນເທົ່ານັ້ນ.

**ມາດຕາ 5 ການຂາຍເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ສາມາດຂາຍເງິນຕາຕ່າງປະເທດໃຫ້ບຸກຄົນໄດ້ໃນວົງເງິນບໍ່ເກີນ 15.000.000 ກີບ (ສິບຫ້າລ້ານກີບ) ຕໍ່ຄົນ ຕໍ່ວັນ, ຊຶ່ງລູກຄ້າຕ້ອງລະບຸຈຸດປະສົງໃນການແລກປ່ຽນເງິນຕາຢ່າງຈະແຈ້ງ ພ້ອມທັງ ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ ໄວ້ເປັນຫຼັກຖານ.

ຮ້ານແລກປ່ຽນເງິນຕາຕົວແທນສາມາດຂາຍເງິນຕາຕ່າງປະເທດໃຫ້ແກ່ບຸກຄົນເທົ່ານັ້ນ ແລະ ບໍ່ສາມາດຂາຍເງິນຕາຕ່າງປະເທດໃຫ້ແກ່ນິຕິບຸກຄົນ; ຊຶ່ງວົງເງິນສູງສຸດທີ່ສາມາດຂາຍໄດ້ທັງໝົດຕໍ່ວັນແມ່ນບໍ່ເກີນທຶນຈົດທະບຽນຂອງຮ້ານແລກປ່ຽນເງິນຕາຕົວແທນເທົ່ານັ້ນ.

ທະນາຄານທຸລະກິດ ເທົ່ານັ້ນ ທີ່ສາມາດຂາຍເງິນຕາຕ່າງປະເທດ ໃຫ້ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງເພື່ອຊຳລະສະສາງກັບຕ່າງປະເທດ, ໃນນັ້ນຕ້ອງພິຈາລະນາຂາຍໃຫ້ຜູ້ທີ່ມີເປົ້າໝາຍຊຳລະຄ່າສິນຄ້າບູລິມະສິດກ່ອນ ເປັນຕົ້ນ: ນ້ຳມັນເຊື້ອໄຟ, ຢາປົວພະຍາດ, ສິນຄ້າອຸປະໂພກ-ບໍລິໂພກ ທີ່ມີຄວາມຈຳເປັນ ແລະ ເປົ້າໝາຍຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ດັ່ງນີ້:

1. ຊຳລະຄ່າສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ;
2. ຊຳລະຄ່າບໍລິການທີ່ຕິດພັນກັບສິນຄ້າ ຂາເຂົ້າ-ຂາອອກ ໂດຍກົງກັບຕ່າງປະເທດ ເຊັ່ນ: ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະ ຄ່າບໍລິການອື່ນ;
3. ຊຳລະໜີ້ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ;
4. ໃຫ້ການຊ່ວຍເຫຼືອແກ່ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ;
5. ໂອນເງິນກຳໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ, ຄ່າບໍລິການອື່ນ ຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດ ກັບຄືນປະເທດ ຫຼື ໄປປະເທດທີສາມ;
6. ໂອນເງິນໄປລົງທຶນຢູ່ຕ່າງປະເທດ;
7. ສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ;
8. ປະຕິບັດເປົ້າໝາຍອື່ນ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ການຂາຍເງິນຕາຕ່າງປະເທດທຸກຄັ້ງ ທະນາຄານທຸລະກິດຕ້ອງໃຫ້ລູກຄ້າປະກອບເອກະສານທີ່ກ່ຽວຂ້ອງຕາມແຕ່ລະເປົ້າໝາຍ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເພື່ອສະເໜີຂໍຊື້ເງິນຕາຕ່າງປະເທດ. ເງິນຕາຕ່າງປະເທດທີ່ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ຈາກການຊື້ນຳທະນາຄານທຸລະກິດ ຕ້ອງໂອນເຂົ້າບັນຊີເງິນຝາກຂອງຕົນ ເພື່ອຊຳລະສະສາງກັບຕ່າງປະເທດ ສອດຄ່ອງຕາມເງື່ອນໄຂທີ່ໄດ້ມີການສະເໜີຂໍຊື້ເງິນຕາຕ່າງປະເທດ ເທົ່ານັ້ນ.

**ມາດຕາ 6 ການກຳນົດ ແລະ ປະຕິບັດອັດຕາແລກປ່ຽນ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ຕ້ອງກຳນົດ ແລະ ປະຕິບັດອັດຕາແລກປ່ຽນ ໃນການຊື້-ຂາຍເງິນຕາກັບລູກຄ້າ ຢ່າງຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ. ການຊື້-ຂາຍເງິນຕາ ລະຫວ່າງສະກຸນເງິນຕາຕ່າງປະເທດດ້ວຍກັນແຕ່ລະຄັ້ງ ຕ້ອງຜ່ານການແລກປ່ຽນເປັນສະກຸນເງິນກີບກ່ອນ ແລະ ຕ້ອງຢູ່ໃນຂອບທີ່ລະບຽບການທີ່ທະນາຄານແຫ່ງ ສປປ ລາວໄດ້ກຳນົດ.

**ມາດຕາ 7 ການພິຈາລະນາຊື້-ຂາຍເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ຕ້ອງໃຊ້ດຸນພິນິດ ໃນການພິຈາລະນາຊື້-ຂາຍເງິນຕາຕ່າງປະເທດ ບົນພື້ນຖານຄວາມສາມາດສະໜອງເງິນຕາຕ່າງປະເທດຂອງຕົນ, ຫຼີກເວັ້ນການຊື້-ຂາຍນຳລູກຄ້າທີ່ມີລັກສະນະສົງໄສ ຫຼື ມີພຶດຕິກຳທີ່ເປັນການປັ່ນປ່ວນອັດຕາແລກປ່ຽນ. ກໍລະນີສົງໄສວ່າລູກຄ້າມີສ່ວນກ່ຽວຂ້ອງກັບການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ທະນາຄານທຸລະກິດຕ້ອງລາຍງານໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ຢ່າງທັນການ; ສ່ວນຮ້ານແລກປ່ຽນເງິນຕາຕົວແທນແມ່ນໃຫ້ລາຍງານຜ່ານທະນາຄານທຸລະກິດທີ່ຕົນເປັນຕົວແທນນັ້ນ.

**ມາດຕາ 8 ການລາຍງານ**

ທະນາຄານທຸລະກິດທີ່ມີຮ້ານແລກປ່ຽນເງິນຕາຕົວແທນຂຶ້ນກັບ ຕ້ອງເປັນເຈົ້າການກຳນົດຫຼັກການ, ລະບຽບການ ໃຫ້ຮ້ານແລກປ່ຽນເງິນຕາຕົວແທນຂອງຕົນ ປະຕິບັດລະບອບລາຍງານໃຫ້ທະນາຄານຕົນ ຢ່າງເປັນລະບົບ.

ສຳນັກງານໃຫຍ່ຂອງທະນາຄານທຸລະກິດຕ້ອງປະຕິບັດການລາຍງານ ຢ່າງເປັນປົກກະຕິ ໃຫ້ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ; ສາຂາຂອງທະນາຄານທຸລະກິດ ຢູ່ຕ່າງແຂວງ ຕ້ອງລາຍງານໃຫ້ສາຂາຂອງທະນາຄານແຫ່ງ ສປປ ລາວ ປະຈຳພາກ ດັ່ງລາຍລະອຽດລຸ່ມນີ້:

1. ລາຍງານການກຳນົດອັດຕາແລກປ່ຽນ ແຕ່ລະສະກຸນເງິນຂອງຕົນ ແລະ ຂອງຮ້ານແລກປ່ຽນເງິນຕາຕົວແທນ ໃຫ້ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ 9:00 ໂມງຂອງແຕ່ລະວັນ; ນອກຈາກນີ້, ຖ້າມີການປັບອັດຕາແລກປ່ຽນເພີ່ມເຕີມໃນລະຫວ່າງວັນ ກໍໃຫ້ລາຍງານກົມນະໂຍບາຍເງິນຕາ ຫຼື ສາຂາຂອງທະນາຄານແຫ່ງ ສປປ ລາວ ປະຈຳພາກ ຊາບທັນທີ ທຸກຄັ້ງ;
2. ລາຍງານການຊື້-ຂາຍເງິນຕາປະຈຳວັນກ່ອນເວລາ 16:00 ໂມງ ຂອງແຕ່ລະວັນໃຫ້ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຫຼື ສາຂາຂອງທະນາຄານແຫ່ງ ສປປ ລາວ ປະຈຳພາກ; ສຳລັບການຊື້-ຂາຍຫຼັງເວລາ 16:00 ໂມງ ແມ່ນໃຫ້ລາຍງານພາຍໃນເວລາ 10 ໂມງຂອງວັນລັດຖະການຖັດໄປ.
3. ການແລກປ່ຽນເງິນຕາທີ່ມີລັກສະນະສົງໄສ ຫຼື ການກະທຳໃດໜຶ່ງທີ່ເປັນການປັ່ນປ່ວນລະບົບອັດຕາແລກປ່ຽນຕ້ອງລາຍງານໃຫ້ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຊາບຢ່າງທັນການ;
4. ການແລກປ່ຽນເງິນຕາທີ່ມີລັກສະນະສົງໄສວ່າກ່ຽວຂ້ອງກັບການຟອກເງິນ ຫຼື ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງລາຍງານໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 9 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເງິນຕາ ແລະ ສາຂາຂອງທະນາຄານແຫ່ງ ສປປ ລາວ ປະຈຳພາກ, ກົມຄຸ້ມຄອງທະນາຄານທຸລະກິດ, ສຳນັກງານຂໍ້ມູນຕ້ານການຟອກເງິນ ມີໜ້າທີ່ຄຸ້ມຄອງ ແລະ ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ຕ້ອງເຂັ້ມງວດປະຕິບັດລະບຽບກົດໝາຍໃນການໃຫ້ບໍລິການແລກປ່ຽນເງິນຕາ, ໃນນັ້ນ, ທະນາຄານທຸລະກິດມີໜ້າທີ່ຄຸ້ມຄອງ, ຕິດຕາມ ກວດກາ ຮ້ານແລກປ່ຽນເງິນຕາຕົວແທນຂອງຕົນໃຫ້ສອດຄ່ອງກັບສັນຍາຕົວແທນ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງທັງພາຍໃນ ແລະ ຕ່າງປະເທດ ຕ້ອງໃຫ້ການຮ່ວມມື ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 10 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຊື້-ຂາຍເງິນຕາ ກັບມວນຊົນ ຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ສະບັບເລກທີ 109/ທຫລ, ລົງວັນທີ 01 ກຸມພາ 2019.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**